ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ ທີ່ ນະຄອນຫຼວງປາຣີ

# ສະບາຍດີປີໃໝ່ລາວ ພ.ສ 2567

ເນື່ອງໃນໂອກາດສິ້ງທ້າຍປີເກົ່າ ພ.ສ 2566 ແລະ ຕ້ອນຮັບປີໃໝ່ ພ.ສ 2567 ທີ່ຈະໝູນວຽນມາເຖິງ, ຂ້າພະເຈົ້າ ພ້ອມດ້ວຍ ພັນລະຍາ ແລະ ພະນັກງານທັງໝົດພາຍໃນ ສະຖານທູດແຫ່ງ ສປປ ລາວ ປະຈຳ ປະເທດຝຣັ່ງ ຂໍສົ່ງພອນໄຊອັນປະເສີດ ແລະ ຄວາມຮັກແພງຢ່າງຈິງໃຈ ມາຍັງພໍ່ແມ່ພີ່ນ້ອງຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ປະເທດຝຣັ່ງ ກໍ່ຄືຢູ່ທຸກແຫ່ງຫົນຂອງໂລກ ພ້ອມດ້ວຍຄອບຄົວທຸກທົ່ວໜ້າ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກ, ມີຄວາມຈະເລີນຮຸ່ງເຮືອງກ້າວໜ້າ, ມີຜົນສຳເລັດໃນໜ້າທີ່ວຽກງານອັນສູງສົ່ງຂອງພວກທ່ານ.

ປີໃໝ່, ຂໍນົບນ້ອມເອົາ ຄຸນ ແລະ ອານຸພາບຂອງພຣະສຣີຣັຕຕະນະຕຣັຍ ແລະ ສິ່ງສັກສິດຢູ່ໃນສາກົນລະໂລກມາກຳຈັດປັດເປົ່າສິ່ງໃດທີ່ບໍ່ດີ, ຄວາມມີອະຄະຕິຕໍ່ກັນ, ຄວາມໂສກເສົ້າຫງ່ອມເຫງົາ, ຄວາມເຫັນຜິດເປັນຖືກ, ການເຫັນກົງຈັກເປັນດອກບົວ, ເຄາະເຂັນອັນຮ້າຍ, ສັບພະທຸກ, ສັບພະໂສກ, ສັບພະໂຣກ, ສັບພະໄພ, ສັບພະຂຶດຽດຈັ່ງໄຣນາໆປະການ ຈົ່ງໃຫ້ໝົດໄປໃນປີເກົ່າ, ປີໃໝ່ຂໍໃຫ້ເປັນປີແຫ່ງສັນຕິສຸກ, ມີສິ່ງດີໆ, ມີຄວາມສາມັກຄີເປັນປຶກແຜ່ນຂອງປວງຊົນລາວໃນທຸກແຫ່ງຫົນ, ມີຄວາມເມດຕາປານີ, ອະໂຫສິກຳໃຫ້ແກ່ກັນແລະກັນ ແລະ ຂໍໃຫ້ມີແຕ່ຮອຍຍິ້ມ, ມີຄວາມເບີກບານມ່ວນຊື່ນ, ມີຄວາມຈະເລີນ ແລະ ມີຄວາມວັດທະນະຖາວອນ.

ໂຊກດີປີໃໝ່ ແລະຂໍໃຫ້ທຸກຄົນປະສົບໄປດ້ວຍ ຈະຕຸພະພອນສີ່ປະການ ອາຍຸ ວັນນະ ສຸຂະ ພາລະ ທຸກໆທ່ານດ້ວຍເຖີ້ນ.

ດ້ວຍຄວາມນັບຖື ແລະ ຮັກແພງຢ່າງສູງ,

ນະຄອນຫຼວງປາຣີ, ວັນທີ 9 ເມສາ 2024

ເອກອັກຄະລັດຖະທູດ

ຄຳອິນ ຄິດຈະເດດ